

World Vison Laos Annual Report 2012

## Health

World Vision believes that every child deserves a good start in life. Child malnutrition levels in Lao PDR continue to be among the highest in Asia and, as a result, children continue to die from preventable illnesses such as diarrhoea and malaria. World Vision is working to improve child nutrition by promoting breastfeeding and good hygiene and increasing access to clean water and sanitation. The following summarises our main activities in this area in 2012:



Addressed child malnutrition through intervention programmes that aim to quickly rehabilitate malnourished children. Malnourished children are given supplements that help them put on weight and the programme also teaches the parents about what food to give their children at different stages of development. Children are routinely monitored to ensure they are progressing and developing.



Protected mothers and children from diseases and infection by supporting the Lao government's vaccination programme. World Vision provided a mobile clinic to administer immunisations and health supplements in target villages. Children under five received immunisation shots for polio, hepatitis B, BCG (tuberculosis), diphtheria and measles, as well as de-worming and vitamin A treatments. Expectant mothers received tetanus shots and improved access to pre- and post-natal care including physical checkups.



Improved sanitation and access to clean water to reduce the spread of communicable and seasonal diseases. This included installing water and sewage systems as well as educating the broader community on how to reduce the spread of diseases. World Vision also trained villagers on how to construct and repair latrines and water tanks. These activities have reduced the instances of illness resulting from consuming dirty water and communicable diseases.




Trained village health workers to provide basic healthcare services at a village level. The health workers were trained by World Vision with support from the District Health Office. They help villages manage childhood and communicable illnesses and also provide information to their community on relevant health matters.

CH4NGE Children

ອົງການ ສຸພະນິມິດ ເຊື່ອວ່າເດັກນ້ອຍທຸກໆຄົນສົມຄວນທີ່ຈະມີການເລີ່ມຕົ້ນໃນຊີວິດທີ່ດີ ແລະ ເພື່ອຈະເຮັດໄດ້ແນວນັ້ນພວກເຮົາຕ້ອງຮັບປະກັນ ແມ່ ແລະ ເດັກ ມີສຸຂະພາບແຂງແຮງ. ການຂາດສານອາຫານຂອງເດັກນ້ອຍໃນ ສ ປ ປ ລາວແມ່ນຍັງສືບຕໍ່ຢູ່ລະດັບສູງໃນທະວີບອາຊີ. ເພາະສະນັ້ນ, ເດັກນ້ອຍຍັງສືບຕໍ່ເສຍຊີວິດຈາກພະຍາດທີ່ສາມາດປ້ອງກັນໄດ້ເຊັ່ນ: ພະຍາດຖອກທ້ອງ ແລະ ພະຍາດໄຂ້ຍຸງ. ອົງການ ສຸພະນິມິດ ກຳລັງສົ່ງເສີມການປັບປຸງໂພຊະນາການຂອງເດັກໂດຍຜ່ານການໂຄສະນາເຊັ່ນ: ການລ້ຽງລູກດ້ວຍນົມແມ່ ແລະ ການມີສຸຂະອະນາໄມທີ່ສົມບູນ ແລະ ການເພີ່ມການເຂົ້າເຖິງນ້ຳສະອາດ ແລະ ສຸຂະອະນະໄມ. ຂ້າງລຸ່ມນີ້ ແມ່ນການສັງລວມບັນດາກິດຈະກຳຫຼັກຂອງວຽກງານໃນຂົງເຂດນີ້ ສຳລັບປີ 2012:



ເພື່ອຮັບມືກັບບັນຫາການຂາດສານອາຫານຂອງເດັກນ້ອຍ, ແຜນງານຕ່າງໆຂອງອົງການມີເປົ້າໝາຍເພື່ອແນ່ໃສ່ການຟື້ນຟູເດັກນ້ອຍຂາດສານອາຫານຢ່າງໄວວາ. ເດັກນ້ອຍທີ່ຂາດສານອາຫານແມ່ນໄດ້ຮັບອາຫານເສີມທີ່ຊ່ວຍໃຫ້ເຂົາເຈົ້າມີນ້ຳໜັກເພີ່ມຂຶ້ນ ແລະ ພໍ່ແມ່ໄດ້ຮຽນຮູ້ກ່ຽວກັບອາຫານທີ່ເໝາະສົມສຳລັບເດັກໃນແຕ່ໄລຍະຂອງການຈະເລີນເຕີບໃຫຍ່ຂອງເດັກ. ເດັກນ້ອຍໄດ້ຮັບການຕິດຕາມເປັນປະຈຳເພື່ອຮັບປະກັນວ່າເດັກນ້ອຍມີການພັດທະນາທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ.



ເພື່ອປ້ອງກັນ ແມ່ ແລະ ເດັກນ້ອຍຈາກການເປັນພະຍາດ ແລະ ການຊຶມເຊື້ອພະຍາດ ທາງອົງການໄດ້ສະໜັບສະໜູນໂຄງການສັກຢາກັນພະຍາດຂອງລັດຖະບານລາວ, ແລະ ອົງການ ສຸພະນິມິດ ໄດ້ສົ່ງເສີມໜ່ວຍງານແພດເຄື່ອນທີ່ເພື່ອບໍລິການສັກຢາກັນພະຍາດ ແລະ ສະໜອງຢາທາດເຫຼັກ, ຢາວິຕາມິນ A ແລະ ຢາຂ້າແມ່ທ້ອງໃຫ້ບັນດາບ້ານເປົ້າໝາຍ. ສຳລັບເດັກນ້ອຍອາຍຸຕ່ຳກວ່າ ຫ້າປີ ແມ່ນໄດ້ຮັບການສັກຢາກັນພະຍາດ ເຊັ່ນ: ໂປລີໂອ, ໂລກຕັບອັກເສບ B, BCG (ວັນນະໂລກ), ໂລກຄໍຕີບ ແລະ ໝາກແດງ, ຮ່ວມທັງຢາຂ້າແມ່ທ້ອງ ແລະ ວິຕາມິນ A. ສ່ວນແມ່ຍິງຖືພາແມ່ນໄດ້ຮັບການສັກຢາກັນໂລກບາດທະຍັກ, ການຝາກທ້ອງ, ການກວດຫລັງຄອດ ແລະ ລວມທັງກວດສຸຂະພາບອື່ນໆອີກດ້ວຍ.



ການສົ່ງເສີມວຽກງານສຸຂະອະນະໄມ ແລະການເຂົ້າເຖິງນ້ຳສະອາດເພື່ອຫຼຸດຜ່ອນການແຜ່ລະບາດຂອງພະຍາດຕິດຕໍ່ ແລະ ພະຍາດທີ່ເກີດຂຶ້ນຕາມລະດູການ. ເຊິ່ງລວມມີກິດຈະກຳເຊັ່ນ: ການລ້າງມື ແລະ ການກໍ່ສ້າງວິດຖ່າຍ ນອກຈາກນັ້ນ, ຍັງມີການໃຫ້ສຸຂະສຶກສາແກ່ຊຸມຊົນເພື່ອປ້ອງກັນພະຍາດລະບາດ. ອົງການ ສຸພະນິມິດ ໄດ້ຝຶກອົບຮົມໃຫ້ຊຸມຊົນດ້ານການກໍ່ສ້າງ, ການສ້ອມແປງວິດຖ່າຍ ແລະ ອ່າງນ້ຳລິນ. ວຽກງານດັ່ງກ່າວແມ່ນໄດ້ຊ່ວຍຫຼຸດຜ່ອນການຕິດຕໍ່ຂອງເຊື້ອພະຍາດທີ່ເປັນຜົນສືບເນື່ອງມາຈາກການດື່ມນ້ຳທີ່ບໍ່ສະອາດ ແລະ ມີເຊື້ອພະຍາດຕິດຕໍ່.




ອົງການສຸພະນິມິດຮ່ວມກັບຫ້ອງການສາທາລະນາສຸກຂັ້ນເມືອງໄດ້ຝຶກອົບຮົມໃຫ້ແກ່ອາສາສະມັກຂັ້ນບ້ານກ່ຽວກັບຄວາມຮູ້ພື້ນຖານການເບິ່ງແຍງສຸຂະພາບໃນຊຸມຊົນ. ພາຍຫລັງການຝຶກ, ອາສາສະມັກເຫຼົ່ານັ້ນຈະໄດ້ຊ່ວຍເບິ່ງແຍງສຸຂະພາບຂອງເດັກ, ຄວບຄຸມການແຜ່ຂະຫຍາຍຂອງພະຍາດຕິດຕໍ່ ແລະ ໃຫ້ການເຜີຍແຜ່ຂໍ້ມູນຂ່າວສານດ້ານສາທາລະນະສຸກແກ່ຊຸມຊົນຂອງເຂົາເຈົ້າ.

CH4NGE Children

contact us

World Vision Lao PDR
333 Nong Bone Road
P.O. Box 312
Vientiane, Lao PDR 1005

Tel: 856 21 414 169, 452, 100
Fax: 856 21 451 101
Email: Laos@wvi.org
Web: www.wvi.org/laos

World Vision